*ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ*
*ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.*

ກະຊວງການເງິນ
ກົມພາສີ

ເລກທີ 1824/ກພສ
ນະຄອນຫຼວງວຽງຈັນ,ວັນທີ 23 APR 2010

# ແຈ້ງການເພີ້ມເຕີມ

*ເຖິງ:* ບັນດາທ່ານຫົວໜ້າພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

*ເລື່ອງ:* ການສົ່ງອອກໄມ້ທ່ອນ,ໄມ້ເລື່ອຍ(ແປຮູບ), ຕໍໄມ້, ປູດໄມ້ ແລະໄມ້ເຄິ່ງສຳເລັດຮູບ(ໄມ້ເຄື່ອງເຮືອນ) ໃຫ້ມາສັງລວມຢູ່ກົມພາສີ ເພື່ອອອກແຈ້ງການແນະນຳ ໃນການຈັດຕັ້ງປະຕິບັດ.

- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີເລກທີ 23/ນຍ ລົງວັນທີ 24/02/2009, ວ່າດ້ວຍການອະນຸຍາດໃຫ້ທາງແຂວງແລະນະຄອນຫຼວງວຽງຈັນຂອງໄມ້ແປຮູບ ທີ່ເປັນໄມ້ຄຸ້ມຄອງ1,2,3 ແລະຕໍໄມ້ອອກຕ່າງປະເທດ.
- ອີງຕາມສັ່ງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22.9.2009 ວ່າດ້ວຍການເພີ້ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ,ປົກປັກຮັກສາປ່າໄມ້ ແລະການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້.

ປະຈຸບັນລັດຖະບານໄດ້ອອກຄຳສັ່ງເລກທີ 17/ນຍ ລົງວັນທີ 22.09.2009 ໂດຍກຳນົດໃນຂໍ້ 23 *"ມີແຕ່ລັດຖະບານເທົ່ານັ້ນ ມີສິດໃນການພິຈາລະນາແລະຕົກລົງເປັນກໍລະນີພິເສດ ກ່ຽວກັບການສົ່ງໄມ້ທ່ອນ, ໄມ້ເລື່ອຍ, ຕໍໄມ້, ປູດໄມ້ ແລະ ໄມ້ເຄິ່ງສຳເລັດຮູບອອກໄປຕ່າງປະເທດ"*, ຊື່ງຜ່ານມາຍັງມີບາງດ່ານພາສີຊາຍແດນບ່ອນໄມ້ສົ່ງອອກ ບໍ່ທັນເອົາໃຈໃສ່ຂອດການປະສານງານ ຕາມແຈ້ງການກົມພາສີ ສະບັບເລກທີ 1743/ກພສ ລົງວັນທີ 3/7/2009. ເພື່ອສ້າງເງື່ອນໄຂໃຫ້ກົມພາສີ ສາມາດສັງລວມໄດ້ການເຄື່ອນໄຫວສົ່ງອອກໄມ້ ຕາມການອະນຸມັດຂອງລັດຖະບານ ໃນທົ່ວປະເທດ.

ກົມພາສີ ອອກແຈ້ງການ, ຄື :

1. ທຸກໆການສົ່ງອອກໄມ້ທ່ອນ, ໄມ້ເລື່ອຍ(ແປຮູບ), ຕໍໄມ້, ປູດໄມ້, ໄມ້ເຄິ່ງສຳເລັດຮູບ(ໄມ້ເຄື່ອງເຮືອນ) ພາຍຫລັງ ທີ່ໄດ້ຮັບອະນຸມັດຈາກ ຄະນະເລຂາທິການລັດຖະບານ(ຄລບ)ແລ້ວ ຕ້ອງສົ່ງສຳເນົາແຈ້ງການດັ່ງກ່າວ ມາສັງລວມຢູ່ກົມພາສີ ເພື່ອອອກແຈ້ງການແນະນຳການຈັດຕັ້ງປະຕິບັດໃຫ້ແກ່ດ່ານພາສີ

ບ່ອນສົ່ງອອກ, ຖ້າບໍ່ມີແຈ້ງການແນະນຳຂອງກົມພາສີ ເດັດຂາດບໍ່ໃຫ້ດ່ານພາສີ ບ່ອນໄມ້ສົ່ງອອກ ຈັດຕັ້ງປະຕິບັດໂດຍລຳພັງ.

- ໃນກໍລະນີ ອຳນາດການປົກຄອງແຂວງ ຫາກມີນະໂຍບາຍເປັນກໍລະນີພິເສດ ອະນຸມັດສົ່ງອອກໄມ້ປະເພດດັ່ງກ່າວ, ຕ້ອງໄດ້ລາຍງານຂໍຄຳເຫັນຈາກກົມພາສີ ເພື່ອມີທິດຊີ້ນຳ.

2. ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ,ໄມ້ປູກ ຕາມການອະນຸມັດ ຂອງອຳນາດການປົກຄອງແຂວງ ມອບໃຫ້ດ່ານພາສີຊາຍແດນບ່ອນສົ່ງອອກ ເປັນເຈົ້າການໃນການຄຸ້ມຄອງກວດກາ ຕາມລະບຽບການ. ຖ້າພົບເຫັນບັນຫາກ່ຽວກັບການສົ່ງອອກ ໃຫ້ລາຍງານຂໍຄຳເຫັນນຳພາສີປະຈຳເຂດ.

3. ມອບໃຫ້ບັນດາພາສີປະຈຳເຂດ, ດ່ານພາສີຊາຍແດນ ເອົາໃຈໃສ່ ພ້ອມກັນຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ໃຫ້ໄດ້ຮັບຜົນຕາມລະດັບຄາດໝາຍ.

4. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ,

ສົມດີພາບ ພົມວິຫານ

ບ່ອນສົ່ງ :

- ຄະນະກົມພາສີ 1 ສະບັບ"ເພື່ອຊາບ"
- ບັນດາພະແນກການກົມພາສີ 1 ສະບັບ "ເພື່ອຕິດຕາມກວດກາ"
- ເກັບມ້ຽນສຳເນົາ 1 ສະບັບ